**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ ເລກທີ 609 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2024

# ຂໍ້ຕົກລົງ

## ວ່າດ້ວຍການດັດແກ້ມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາເງິນແຮຝາກບັງຄັບ ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມມະຕິກອງປະຊຸມຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2024 ສະບັບເລກທີ 02/ສພຫ.ຄນງ, ລົງວັນທີ 11 ມິຖຸນາ 2024.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນເພື່ອດັດແກ້ເນື້ອໃນຂອງມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາເງິນແຮຝາກບັງຄັບ ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023 ໃຫ້ສອດຄ່ອງກັບທິດທາງການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ເພື່ອຄວບຄຸມປະລິມານເງິນ M2 ໃຫ້ຢູ່ໃນລະດັບຕາມແຜນເງິນຕາທີ່ຖືກຮັບຮອງ ພ້ອມທັງປັບປຸງໂຄງສ້າງເງິນແຮຝາກບັງຄັບໃຫ້ແທດເໝາະກັບສະພາບໃນໄລຍະໃໝ່ ແນໃສ່ຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ.

**ມາດຕາ 2 ດັດແກ້ມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາເງິນແຮຝາກບັງຄັບ ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023**

ທະນາຄານທຸລະກິດຕ້ອງປະຕິບັດຫຼັກການຮັກສາເງິນແຮຝາກບັງຄັບ ໄວ້ນຳທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນດັ່ງນີ້:

1. ເງິນແຮຝາກບັງຄັບສຳລັບສະກຸນເງິນກີບແມ່ນໃຫ້ຮັກສາຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 777/ທຫລ, ລົງວັນທີ 23 ສິງຫາ 2023, ໃນນັ້ນ:
   - ເປັນເງິນສົດ (ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ) ຫ້າສິບສ່ວນຮ້ອຍ (50%) ຂຶ້ນໄປຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;
   - ເປັນຫຼັກຊັບທີ່ບໍ່ມີພາລະຜູກພັນ ຄື ພັນທະບັດຂອງທະນາຄານແຫ່ງ ສປປ ລາວ, ພັນທະບັດຂອງກະຊວງການເງິນທີ່ຂາຍຜ່ານ ທຫລ ແລະ ຕະຫຼາດຫຼັກຊັບລາວ ລວມທັງພັນທະບັດບ້ວງຊຳລະໜີ້ໂຄງການລົງທຶນຂອງລັດ ທີ່ມີອາຍຸບໍ່ເກີນ 1 ປີ ບໍ່ເກີນຫ້າສິບສ່ວນຮ້ອຍ (50%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຂອງການຄຳນວນ.
2. ສຳລັບເງິນແຮຝາກບັງຄັບສຳລັບສະກຸນເງິນຕາຕ່າງປະເທດແມ່ນໃຫ້ຮັກສາໄວ້ຄືເກົ່າ.

**ມາດຕາ 3 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນທີ 20 ມິຖຸນາ 2024 ເປັນຕົ້ນໄປ ແລະ ໃຊ້ປ່ຽນແທນມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ